## Saint Thomas Health (ສູນສຸຂະພາບເຊັນໂທມັສ)

**<u>ສັງລວມນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ</u>**

ອັບເດດ ກໍລະກົດ 2017

Saint Thomas Health (ສູນສຸຂະພາບເຊັນໂທມັສ) ມີຄໍາໝັ້ນສັນຍາຕໍ່ ແລະ ຄວາມເຄົາລົບກຽດສັກສີຂອງແຕ່ລະບຸກຄົນທີ່ມີຄວາມກັງວົນພິເສດສໍາລັບຜູ້ທີ່ພະຍາຍາມຂ້າມຜ່ານອຸປະສັກໃນການເຂົ້າເຖິງການບໍລິການເບິ່ງແຍງດູແລສຸຂະພາບ. Saint Thomas Health (ສູນສຸຂະພາບເຊັນໂທມັສ) ໃຫ້ຄໍາໝັ້ນສັນຍາທີ່ເທົ່າທຽມກັນໃນການຈັດການຊັບພະຍາກອນການເບິ່ງແຍງດູແລສຸຂະພາບຂອງຕົນເອງໃນການບໍລິການໃຫ້ກັບທັງໝົດຊຸມຊົນ. ໃນການຂັບເຄື່ອນຫຼັກການເຫຼົ່ານີ້ຕໍ່ໄປຂ້າງໜ້ານັ້ນ, Saint Thomas Health (ສູນສຸຂະພາບເຊັນໂທມັສ) ໃຫ້ການຊ່ວຍເຫຼືອທາງດ້ານການເງິນແກ່ບາງບຸກຄົນ ຜູ້ທີ່ໄດ້ຮັບການເບິ່ງແຍງດູແລສຸກເສີນ ແລະ ຈໍາເປັນທາງການແພດອື່ນໆຈາກ Saint Thomas Health (ສູນສຸຂະພາບເຊັນໂທມັສ) . ພາກສັງລວມນີ້ຈັດໃຫ້ເຫັນບົດສັງລວມໂດຍຫຍໍ້ຂອງນະໂຍບາຍການຊ່ວຍເຫຼືອດ້ານການເງິນຂອງ Saint Thomas Health (ສູນສຸຂະພາບເຊັນໂທມັສ).

**<u>ໃຜມີສິດໄດ້ຮັບ?</u>**

ທ່ານອາດຈະສາມາດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນ. ໂດຍທົ່ວໄປແລ້ວ ການຊ່ວຍເຫຼືອທາງດ້ານການເງິນແມ່ນໄດ້ກໍານົດໂດຍລາຍຮັບຄົວເຮືອນທັງຫມົດຂອງທ່ານເມື່ອທຽບກັບລະດັບຄວາມທຸກຍາກຂອງລັດ ຖະບານ ກາງ. ຖ້າລາຍຮັບຂອງທ່ານຫນ້ອຍກ່ວາ ຫຼື ເທົ່າກັບ 250 % ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານຈະໄດ້ຮັບການເບິ່ງແຍງດູແລການກຸສົນ 100% ຂຽນໄວ້ຢູ່ໃນສ່ວນຂອງຄ່າໃຊ້ຈ່າຍທີ່ທ່ານມີຄວາມຮັບຜິດຊອບ
ຖ້າຫາກວ່າລາຍຮັບຂອງທ່ານສູງກວ່າ 250 % ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ ແຕ່ບໍ່ເກີນ 400 % ຂອງລະດັບຄວາມທຸກຍາກຂອງລັດຖະບານກາງ, ທ່ານອາດຈະໄດ້ຮັບອັດຕາສ່ວນຫຼຸດລາຄາຢູ່ໃນລະດັບການຫຼຸດຄ່າບໍລິການ. ຄົນເຈັບຜູ້ທີ່ມີສິດໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນຈະບໍ່ຖືກເກັບຄ່າເພີ່ມສໍາລັບການເບິ່ງແຍງດູແລທີ່ມີສິດໄດ້ຮັບຫຼາຍກ່ວາຈໍານວນທີ່ໄດ້ສົ່ງບິນເກັບເງິນໂດຍທົ່ວໄປກັບຄົນເຈັບທີ່ມີຄຸ້ມຄອງປະກັນໄພ.

**<u>ການບໍລິການໃດແດ່ໄດ້ຮັບການຄຸ້ມຄອງ?</u>**

ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນໄດ້ນໍາໃຊ້ກັບການເບິ່ງແຍງດູແລສຸກເສີນ ແລະ ການເບິ່ງແຍງດູແລທີ່ຈໍາເປັນທາງການແພດອື່ນໆ. ຂໍ້ກໍານົດເຫຼົ່ານີ້ແມ່ນໄດ້ກໍານົດໄວ້ໃນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ. ບໍລິການເລືອກແມ່ນນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນບໍ່ໄດ້ຄຸ້ມຄອງໃຫ້.

**<u>ຂ້າພະເຈົ້າສາມາດສະຫມັກຂໍໄດ້ແນວໃດ?</u>**

ເພື່ອສະຫມັກຂໍການຊ່ວຍເຫຼືອທາງດ້ານການເງິນ, ປົກກະຕິທ່ານ ຈະຕ້ອງຂຽນໃບຄໍາຮ້ອງສະຫມັກຂໍເປັນລາຍລັກ ອັກສອນ ແລະ ປະກອບເອກະສານສະໜັບສະໜູນໃຫ້ຕາມທີ່ລະບຸໄວ້ໃນນະໂຍບາຍການຊ່ວຍເຫຼືອທາງ ດ້ານການເງິນ ແລະ ການໃຊ້ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ.

**<u>ຂ້າພະເຈົ້າສາມາດຂໍການຊ່ວຍເຫລືອໃນການສະໝັກຂໍໄດ້ແນວໃດ?</u>**

ສໍາລັບການຊ່ວຍເຫຼືອກັບເລື່ອງການຮູ້ຂໍນະໂຍບາຍການຊ່ວຍເຫຼືອດ້ານການເງິນ, ທ່ານອາດຈະຕິດຕໍ່ຫາສະມາຊິກທີມງານຊ່ວຍເຫຼືອດ້ານການເງິນໄດ້ທີ່ເບີໂທໃດໜຶ່ງຢູ່ລຸ່ມນີ້ຕາມສະຖານບໍລິການສະເພາະ.

**ຂ້າພະເຈົ້າສາມາດຂໍຂໍ້ມູນເພີ່ມເຕີມແນວໃດ?**
ສຳເນົາເອກະສານນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ ແລະ ແບບຟອມໃບຄຳຮ້ອງຂໍນະໂຍບາຍການ ຊ່ວຍເຫຼືອທາງດ້ານການເງິນມີໃຫ້ຢູ່ທີ່ http://www.sthealth.com/patients-and-visitors/financial-assistance ແລະ ຕາມລາຍຊື່ຕິດຕໍ່ສະເພາະຢູ່ລຸ່ມນີ້. ສາມາດຂໍຮັບເອົາສຳເນົານະໂຍບາຍການຊ່ວຍເຫຼືອທາງ ດ້ານການເງິນ ແລະ ການນຳໃຊ້ນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນໄດ້ຟຣີໂດຍທາງໄປສະນີທີ່ P. O. Box 380 Nashville, TN 37202. ຂໍ້ມູນເພີ່ມເຕີມກ່ຽວກັບນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນຍັງມີໃຫ້ຕາມສະຖານບໍລິການຢູ່ທີ່ລາຍຊື່ຕິດຕໍ່ສະເພາະຢູ່ລຸ່ມນີ້.

**ຈະເປັນແນວໃດຖ້າຫາກວ່າຂ້າພະເຈົ້າບໍ່ມີສິດໄດ້ຮັບ?**
ຖ້າຫາກວ່າທ່ານບໍ່ມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອທາງດ້ານການເງິນພາຍໃຕ້ນະໂຍບາຍການຊ່ວຍເຫຼືອທາງ ດ້ານການເງິນ, ທ່ານອາດຈະມີເງື່ອນໄຂໄດ້ຮັບການຊ່ວຍເຫຼືອປະເພດອື່ນ. ສຳລັບຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່ທີມງານຊ່ວຍເຫຼືອດ້ານການເງິນຂອງພວກເຮົາໄດ້ທີ່ເບີໂທໃດໜຶ່ງຢູ່ລຸ່ມນີ້ຕາມສະຖານບໍລິການສະເພາະ

**ຂໍ້ມູນຕິດຕໍ່ການຊ່ວຍເຫຼືອດ້ານການເງິນ**

| | |
|---|---|
| Saint Thomas Midtown Hospital (ໂຮງໝໍເຊັ້ນໂທມັສມິດທາວ) | 615-284-5340 |
| Saint Thomas Rutherford Hospital (ໂຮງໝໍເຊັ້ນໂທມັສຣັດເຕີຟອດ) | 615-222-6638 |
| Saint Thomas West Hospital (ໂຮງໝໍເຊັ້ນໂທມັສເວັສທ໌) | 615-222-6638 |
| Saint Thomas Dekalb Hospital (ໂຮງໝໍເຊັ້ນໂທມັສດີກາບ) | 615-215-5338 |
| Saint Thomas Stones River Hospital (ໂຮງໝໍເຊັ້ນໂທມັສສະໂຕນຣິເວີ) | 615-215-5338 |
| Saint Thomas Highlands Hospital (ໂຮງໝໍເຊັ້ນໂທມັສໄຮແລນ) | 931-738-4138 |
| Saint Thomas River Park Hospital (ໂຮງໝໍເຊັ້ນໂທມັສຣິເວີປາກ) | 931-815-4107 |
| Saint Thomas Hickman Hospital (ໂຮງໝໍເຊັ້ນໂທມັສຮິກແມນ) | 931-729-4271 |
| Saint Thomas Hospital for Specialty Surgery (ໂຮງໝໍຜ່າຕັດສະເພາະເຊັ້ນໂທມັສ) | 615-341-7480 |
| Saint Thomas Medical Partners (ຫຸ້ນສ່ວນການແພດເຊັ້ນໂທມັສ) | 800-566-5050 |
| Saint Thomas Emergency Medical Services (ໜ່ວຍບໍລິການທາງການແພດສຸກເສີນເຊັ້ນໂທມັສ) | 877-664-4076 |
| Saint Thomas LabPlus (ເຊັ້ນໂທມັສແລັບພະລັສ) | 615-284-2773 |
| Saint Thomas Center for Sleep (ສູນເພື່ອການນອນຫຼັບເຊັ້ນໂທມັສ) | 615-284-7537 |
| Baptist Ambulatory Surgery Center (ສູນຜ່າຕັດເຄື່ອນທີ່ບາບຕິສ) | 615-321-7730 |

**ການແປນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ, ໃບຄຳຮ້ອງຂໍນະໂຍບາຍການຊ່ວຍເຫຼືອທາງດ້ານການເງິນ, ແລະ ສະຫຼຸບສັງລວມພາສານີ້ແມ່ນມີໃຫ້ເປັນພາສາດັ່ງຕໍ່ໄປນີ້ຕາມການຂໍ:**

ພາສາສະເປນ

ພາສາອາຣັບ

ພາສາຫວຽດນາມ

ພາສາຈີນ

ພາສາລາວ